**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 79 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 30/12/22

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍ ການຮັບຮອງເອົາບົດລາຍງານ ຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງວຽກງານ ປະຈຳປີ 2023

- ອີງຕາມ ລັດຖະທຳມະນູນ ສະບັບປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປີ 2020 ມາດຕາ 59;
- ອີງຕາມ ບົດລາຍງານ ຂອງ ອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 026/ອອປສ, ລົງວັນທີ 29 ທັນວາ 2022.

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ ບົດລາຍງານ ຂອງອົງການໄອຍະການປະຊາຊົນສູງສຸດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວາລະກອງປະຊຸມ ຄັ້ງວັນທີ 26-27 ທັນວາ 2022.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານ ຂອງ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022**

ກອງປະຊຸມສະແດງຄວາມຊົມເຊີຍ ອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ຕໍ່ສູ້ຜ່ານຜ່າອຸປະສັກຕ່າງໆ, ຕັ້ງໜ້າຈັດຕັ້ງປະຕິບັດວຽກຈຸດສຸມ ໃນປີ 2022 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຊຶ່ງສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ເປັນຕົ້ນ: ໄດ້ປັບປຸງກົງຈັກການຈັດຕັ້ງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ເປັນລະບົບ ແລະ ໜັກແໜ້ນຕື່ມ; ໄດ້ສຸມໃສ່ຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ໂດຍສະເພາະແມ່ນ ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ນ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງດີຂຶ້ນ, ເອົາໃຈໃສ່ຕິດຕາມກວດກາ ແລະ ມີມາດຕະການແກ້ໄຂ ກໍລະນີພົບເຫັນມີການລະເມີດກົດໝາຍ; ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການຖະແຫຼງໃນທີ່ປະຊຸມສານຂອງອົງການໄອຍະການປະຊາຊົນ ແຕ່ລະຂັ້ນ ໄດ້ຮັບການປັບປຸງມີຄຸນນະພາບສູງຂຶ້ນ. ນອກນັ້ນ, ອົງການໄອຍະການປະຊາຊົນສູງສຸດ ຍັງໄດ້ສຸມໃສ່ຄົ້ນຄວ້າອອກນິຕິກຳ ທີ່ພົວພັນກັບການເຄື່ອນ

ໄຫວວຽກງານ ໄດ້ຫຼາຍກວ່າ 30 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີຄຸນນະພາບດີຂຶ້ນ.

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດດັ່ງກ່າວ, ກອງປະຊຸມເຫັນວ່າ ຍັງມີດ້ານຄົງຄ້າງທີ່ອົງການໄອຍະການປະຊາຊົນສູງສຸດ ຕ້ອງໄດ້ສືບຕໍ່ສຸມໃສ່ແກ້ໄຂ ເປັນຕົ້ນ: ການຕິດຕາມກວດກາທົ່ວໄປຍັງເຮັດໄດ້ໜ້ອຍ ແລະ ບໍ່ທັນມີຈຸດສຸມ; ການຕິດຕາມກວດກາອົງການສືບສວນ-ສອບສວນ; ການສັ່ງຟ້ອງ ແລະ ການຕິດຕາມກວດກາການປະຕິບັດກົດໝາຍໃນທີ່ປະຊຸມສານ ບາງຄະດີ ການປະກອບຂໍ້ມູນຫຼັກຖານ ຍັງບໍ່ທັນຄົບຖ້ວນ ແລະ ຍັງບໍ່ທັນຮັບປະກັນໄດ້ຄວາມຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ທັນຕາມກຳນົດເວລາ; ການຕິດຕາມກວດກາ ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຍັງບໍ່ທັນລົງເລິກຫາສາຍເຫດ ທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ ແລະ ຍັງບໍ່ທັນສະເໜີມາດຕະການແກ້ໄຂ ໃຫ້ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການກ່ຽວຂ້ອງ; ການບຳລຸງສ້າງ, ຍົກລະດັບທາງດ້ານທິດສະດີການເມືອງ, ຈັນຍາບັນ, ຈັນຍາທຳ ໃຫ້ພະນັກງານໄອຍະການ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ຈຶ່ງພາໃຫ້ເກີດມີປະກົດການຫຍໍ້ທໍ້ຕ່າງໆ ຢູ່ພາຍໃນກົງຈັກຂອງອົງການໄອຍະການປະຊາຊົນ.

**ມາດຕາ 2 ຮັບຮອງເອົາ ທິດທາງວຽກງານ ປີ 2023 ຂອງອົງການໄອຍະການປະຊາຊົນສູງສຸດ**

ກອງປະຊຸມເຫັນດີຮັບຮອງເອົາ 5 ຄາດໝາຍສູ້ຊົນ ແລະ 9 ວຽກງານຈຸດສຸມ ປີ 2023 ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ສະເໜີໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດບາງວຽກ ດັ່ງນີ້:

1. ຄະນະນຳອົງການໄອຍະການປະຊາຊົນສູງສຸດ ຕ້ອງເອົາໃຈໃສ່ເປັນພິເສດຕໍ່ການກໍ່ສ້າງພະນັກງານໄອຍະການປະຊາຊົນ ທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ ຕິດພັນກັບການຍົກລະດັບຄວາມຮູ້ຄວາມສາມາດ, ຄວາມຊຳນານງານ, ຮັບປະກັນການປະຕິບັດໜ້າທີ່ວຽກງານຢ່າງມີປະສິດທິພາບ, ພ້ອມກັນນີ້ ຕ້ອງເອົາໃຈໃສ່ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງໃຫ້ທົ່ວເຖິງ ແລະ ເລິກເຊິ່ງ, ເພີ່ມທະວີການຕິດຕາມກວດກາ ການປະຕິບັດໜ້າທີ່ຂອງພະນັກງານໄອຍະການ ຢ່າງເຂັ້ມງວດ, ປຸກແຮງຂະບວນການແຂ່ງຂັນ ວຽກດີ ຄົນເດັ່ນ ຕາມຄຳຂວັນ 3 ມີ (ມີແນວຄິດການເມືອງດີ, ມີການພັດທະນາດີ, ມີຄວາມສາມັກຄີດີ) ແລະ 4 ຮັບປະກັນ (ຮັບປະກັນຖືກຕ້ອງຕາມກົດໝາຍ, ຍຸຕິທຳ, ໂປ່ງໃສ ແລະ ຖືກຕ້ອງຕາມກຳນົດເວລາ) ແລະ ບັນລຸມາດຕະຖານລວມ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ໃຫ້ກາຍເປັນຮູບປະທຳ;
2. ສູ້ຊົນຈັດຕັ້ງປະຕິບັດພາລະບົດບາດ ຕິດຕາມກວດກາທົ່ວໄປ ໃຫ້ເປັນຮູບປະທຳເປັນຈິງຫຼາຍຂຶ້ນກວ່າເກົ່າ, ສຸມໃສ່ຕິດຕາມກວດກາການອອກນິຕິກຳໃຕ້ກົດໝາຍ ໃຫ້ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບ ລັດຖະທຳມະນູນ ແລະ ກົດໝາຍ, ຊອກເຫັນນິຕິກຳທີ່ບໍ່ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ເພື່ອສະເໜີໃຫ້ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂໃຫ້ທັນການ;
3. ຍົກສູງຄຸນນະພາບໃນການຕິດຕາມກວດກາ ການປະຕິບັດໜ້າທີ່ ຂອງອົງການສືບສວນ-ສອບສວນ ໃນການປະຕິບັດ 7 ມາດຕະການສະກັດກັ້ນ ຕາມມາດຕາ 136 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປີ 2017, ສຸມໃສ່ແກ້ໄຂພຶດຕິກຳລະເມີດກົດໝາຍໃນການດຳເນີນຄະດີ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ເປັນຕົ້ນ ກຳນົດເວລາໃນການສືບສວນ-ສອບສວນ, ການຂໍຄຳສັ່ງກັກຂັງພາງ, ການກັກຕົວ, ຈັບຕົວ, ກັກຂັງ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ປະສານສົມທົບກັບເຈົ້າໜ້າທີ່ສືບສວນສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສ້າງນິຕິກຳສະເພາະ ກ່ຽວກັບການປະຕິບັດ 7 ມາດຕະການສະກັດກັ້ນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມເປັນເອກະພາບ, ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ;

4. ຍົກສູງຄຸນນະພາບ ການຄົ້ນຄວ້າແກ້ໄຂຄະດີອາຍາ, ຄະດີແພ່ງ ແລະ ຄໍາຮ້ອງ, ຄໍາສະເໜີໃຫ້ບັນລຸຄາດໝາຍ 95% ຂອງຈໍານວນຄະດີທີ່ເຂົ້າມາທັງໝົດ; ປະຕິບັດສິດສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການໂຕ້ແຍ້ງຢູ່ທີ່ປະຊຸມສານ ແລະ ຮັບປະກັນການຕັດສິນຂອງສານ ເອົາຕາມຄໍາຖະແຫຼງຂອງອົງການໄອຍະການປະຊາຊົນ ໃຫ້ໄດ້ 95% ຂຶ້ນໄປ;
5. ເພີ່ມທະວີການຕິດຕາມກວດກາ ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ເປັນຕົ້ນຄະດີທີ່ມີຄວາມຫຍຸ້ງຍາກ, ສັບສົນ, ຄະດີທີ່ຜູ້ປະຕິບັດໂທດໄດ້ພົ້ນໂທດທາງອາຍາ ແຕ່ການປະຕິບັດຄ່າເສຍຫາຍທາງແພ່ງ ແລະ ຄ່າປັບໃໝ ບໍ່ທັນສໍາເລັດ ແລະ ອື່ນໆ;
6. ສືບຕໍ່ຈັດຕັ້ງການປະເມີນການປະຕິບັດກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ໃຫ້ຮັບປະກັນທາງດ້ານຄຸນນະພາບ, ຊອກໃຫ້ເຫັນດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ, ບັນຫາທີ່ບໍ່ສາມາດປະຕິບັດໄດ້ ຫຼືມີການລະເມີດກົດໝາຍ, ບັນຫາທີ່ເປັນຊ່ອງຫວ່າງຂອງກົດໝາຍ, ບັນຫາທີ່ເຫັນວ່າມີຄວາມຈໍາເປັນຕ້ອງໄດ້ຜັນຂະຫຍາຍເປັນນິຕິກໍາໃຕ້ກົດໝາຍ ເພື່ອເປັນບ່ອນອີງໃນການກໍານົດວິທີການ, ມາດຕະການ ປັບປຸງ, ແກ້ໄຂໃຫ້ສາມາດລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

**ມາດຕາ 3 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ຂອງ ອົງການໄອຍະການປະຊາຊົນສູງສຸດ**

ກອງປະຊຸມເຫັນດີຮັບຮອງເອົາ 5 ມາດຕະການ ໃນການຈັດຕັ້ງປະຕິບັດທິດທາງແຜນການ ແລະ ວຽກຈຸດສຸມ 2023 ທີ່ອົງການໄອຍະການປະຊາຊົນສູງສຸດ ໄດ້ກໍານົດໃນບົດລາຍງານ ແລະ ສະເໜີ ບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບການເມືອງ ຂອງຄະນະນໍາອົງການໄອຍະການປະຊາຊົນສູງສຸດ ໃນການນໍາພາ-ຊີ້ນໍາການຈັດຕັ້ງຜັນຂະຫຍາຍ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ອອກເປັນແຜນງານ, ໂຄງການ ແລະ ວຽກງານຈຸດສຸມ ແຕ່ລະດ້ານ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ; ເອົາໃຈໃສ່ນໍາພາ-ຊີ້ນໍາ ການຈັດຕັ້ງປະຕິບັດວຽກງານ ປີ 2023 ໃຫ້ແທດເຖິງ ແລະ ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ບັນດານິຕິກໍາທີ່ກ່ຽວຂ້ອງ ໃຫ້ພະນັກງານໄອຍະການປະຊາຊົນ ຢ່າງທົ່ວເຖິງ ເພື່ອເຮັດໃຫ້ບັນດາຄາດໝາຍສູ້ຊົນ ໃນປີ 2023 ໄດ້ຮັບການຈັດຕັ້ງປະຕິບັດມີຜົນສໍາເລັດຕາມແຜນການທີ່ໄດ້ກໍານົດໄວ້;
2. ເອົາໃຈໃສ່ຄົ້ນຄວ້າຜັນຂະຫຍາຍເນື້ອໃນຂອງກົດໝາຍ ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນນິຕິກໍາໃຕ້ກົດໝາຍໃຫ້ແທດຕົວຈິງ ແລະ ຮັດກຸມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນ; ພ້ອມທັງປັບປຸງ ກົນໄກ, ຮູບການ, ວິທີການໃນການເຄື່ອນໄຫວວຽກງານຕິດຕາມກວດກາ ຕາມມາດຕາ 39, 40, 42, 43, 45, 46, 47, 48, 49, 50, 51, 52, 53 ແລະ ມາດຕາ 54 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງຕາມກົດໝາຍ;
3. ເພີ່ມທະວີການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນສູງສຸດ ຕໍ່ພະນັກງານໄອຍະການປະຊາຊົນ ແຕ່ລະຂັ້ນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ຮັບປະກັນໃຫ້ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງສູ່ຄຸນນະພາບສູງກວ່າເກົ່າ; ພ້ອມນັ້ນ ຕ້ອງມີມາດຕະການເດັດຂາດ ຕໍ່ພະນັກງານທີ່ມີການປະພຶດບໍ່ຖືກຕ້ອງ ແລະ ລະເມີດກົດໝາຍ;

4. ສືບຕໍ່ປັບປຸງກົນໄກ ໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການທາງດ້ານກົດໝາຍໃຫ້ສຳເລັດ ແນໃສ່ສ້າງຄວາມຮັບຮູ້, ຄວາມເຂົ້າໃຈໃຫ້ແກ່ປະຊາຊົນ ກ່ຽວກັບການເຂົ້າເຖິງຂະບວນຍຸຕິທຳ ແລະ ກົດໝາຍຫຼາຍຂຶ້ນ ທັງສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ມີໂອກາດເຂົ້າຮ່ວມຕິດຕາມກວດກາການດຳເນີນຄະດີຕາມຂະບວນຍຸຕິທຳ, ສະກັດກັ້ນປະກົດການຫຍໍ້ທໍ້ ຢູ່ໃນຂະບວນຍຸຕິທຳ;
5. ເພີ່ມທະວີການປະສານສົມທົບ ລະຫວ່າງ ອົງການໄອຍະການປະຊາຊົນ ກັບ ສານປະຊາຊົນ, ອົງການສືບສວນ-ສອບສວນ, ອົງການປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມກົມກຽວ ແລະ ເປັນເອກະພາບກັນ.

## ມາດຕາ 4 ການຈັດຕັ້ງປະຕິບັດ

1. ມອບໃຫ້ ອົງການໄອຍະການປະຊາຊົນສູງສຸດ ຈັດຕັ້ງປະຕິ ບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ຮ່ວມກັບກຳມາທິການຍຸຕິທຳ ສົມທົບກັບ ລັດຖະບານ ຊີ້ນຳ ກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ພິຈາລະນາເພີ່ມງົບປະມານ, ສະໜອງພາຫະນະ, ອຸປະກອນ ແລະ ປັບປຸງກໍ່ສ້າງພື້ນຖານໂຄງລ່າງ ທີ່ຈຳເປັນ ໃຫ້ແກ່ອົງການໄອຍະການປະຊາຊົນ ເພື່ອສາມາດຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ຕາມກົດໝາຍ ໃຫ້ສຳເລັດຕາມແຜນການທີ່ວາງໄວ້;
3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ ຊີ້ນຳ ບັນດາກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕິດຕາມ, ຊຸກຍູ້ ແລະ ອຳນວຍຄວາມສະດວກ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ. ກຳມາທິການຍຸຕິທຳ ຕ້ອງເສີມຂະຫຍາຍບົດບາດ ເປັນໃຈກາງປະສານງານ ແລະ ເປັນເຈົ້າການ ໃນການຕິດຕາມ, ຊຸກຍູ້ ແລະ ກວດກາການປະເມີນຜົນການຈັດຕັ້ງປະຕິບັດມະຕິສະບັບນີ້ ແລະ ລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເປັນປະຈຳ ເພື່ອຊາບ ແລະ ຊີ້ນຳ.

## ມາດຕາ 5 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ